LAO

# ຄໍາແນະນໍາສໍາລັບການໃຊ້ກວດຫາເຊື້ອ HIV ດ້ວຍຕົວເອງ

ທ່ານຕ້ອງປະຕິບັດຕາມຄໍາແນະນໍາການກວດໃຫ້ຄົບຖ້ວນ ເພື່ອໃຫ້ໄດ້ຜົນທີ່ຖືກຕ້ອງ. ຫ້າມກິນ ຫຼື ດື່ມອັນໃດເປັນເວລາຢ່າງໜ້ອຍ 15 ນາທີກ່ອນທ່ານເລີ່ມຕົ້ນກວດ ຫຼື ໃຊ້ຜະລິດຕະພັນອະນາໄມປາກ 30 ນາທີກ່ອນທ່ານເລີ່ມຕົ້ນກວດ.

ຄໍາເຕືອນ: ຖ້າທ່ານພວມຢູ່ໃນການປິ່ນປົວ HIV ດ້ວຍຢາຕ້ານ (ARVs) ທ່ານອາດຈະໄດ້ຜົນທີ່ບໍ່ຖືກຕ້ອງ.

ເບິ່ງຄໍາແນະນໍາ

www.oraquickhivselftest.com

ORAQUICK®
HIV SELF-TEST

## ວິທີໃຊ້ຊຸດເຄື່ອງມືກວດຫາເຊື້ອ HIV ຂອງ ORAQUICK® ດ້ວຍຕົວເອງ




ທ່ານຈະຕ້ອງມີວິທີເພື່ອຕັ້ງເວລາໃນລະນະການກວດ




ໃນຊອງຊຸດກວດປະກອບມີ: **ຊຸດເຄື່ອງມືກວດ, ອັນຕັ້ງແຜ່ນປ້າຍປາກກວດ** ແລະ **ຄໍາແນະນໍາສໍາລັບການໃຊ້.**




ຊຸດເຄື່ອງມືກວດຂອງທ່ານປະກອບມີສອງຊອງ.




ຈີກ-ເປີດຊອງທີ່ມີຫຼອດນໍ້າຢາອອກ.




ຖອດຝາປິກນໍ້າຢາອອກ.




**ຫ້າມ**ຖອກນໍ້າຢາອອກ. **ຫ້າມດື່ມ.**




ເອົາຫຼອດນໍ້າຢາວາງລົງໃສ່ອັນຕັ້ງ.




ຈີກຊອງທີ່ມີອຸປະກອນກວດ ແລະ ເອົາອອກ. **ຫ້າມ**ໃຊ້ນີ້ວມືຂອງທ່ານຈັບປາຍແຜ່ນປ້າຍປາກ. **ຫ້າມ**ກິນ ຫຼື ກິນສານກັນບູດ.




ກົດແຜ່ນປ້າຍປາກກວດລົງໃສ່ເຫືອກນອກຂອງທ່ານໃຫ້ແໜ້ນໆ ແລະ ສັບປ່ຽນມັນໄປຫາເຫືອກນອກເບື້ອງເທິງຂອງທ່ານອີກເທື່ອໜຶ່ງ (ຮູບທີ 1) **ແລະ** ເຫືອກດ້ານລຸ່ມອີກເທື່ອໜຶ່ງ (ຮູບທີ 2).




ຈຸ່ມ**ແຜ່ນປ້າຍປາກ**ກວດລົງໄປໃສ່ຫຼອດນໍ້າຢາຈົນກວ່າມັນຮອດພື້ນລຸ່ມ ແລະຖືກນໍ້າຢາ.




**ປະມັນໄວ້ໃນຫຼອດນໍ້າຢາບ່ອນນັ້ນເປັນເວລາ 20 ນາທີກ່ອນອ່ານຜົນ.** ຫ້າມອ່ານຜົນຫຼັງຈາກ 40 ນາທີ.

## ການແປຜົນໄດ້ຮັບ | ອ່ານຜົນກວດຢູ່ບ່ອນທີ່ມີໄຟແຈ້ງດີ

### ຜົນກວດ HIV ອອກມາເປັນບວກ




ສອງຂີດເຕັມ,
ເຖິງແມ່ນວ່າຂີດຈະຈາງ,
ໝາຍຄວາມວ່າ ທ່ານອາດຈະມີ HIV ເປັນບວກ ແລະ ທ່ານຈໍາເປັນຕ້ອງໄດ້ຂໍກວດເລືອດເພື່ອຢັ້ງຢືນອີກຕື່ມ



*ໃນທັນທີທັນໃດທີ່ຕ້ອງເຮັດ. . .*

**ໄປໂຮງໝໍ ຫລື ສູນກວດຫາເຊື້ອ HIV ຫຼື ສະຖານບໍລິການສຸຂະພາບທີ່ຢູ່ໃກ້ບ້ານຂອງທ່ານ**

### ຜົນກວດທີ່ອ່ານຜົນບໍ່ໄດ້




ບໍ່ມີຂີດຢູ່ຕໍ່ໜ້າ CŽ (ເຖິງແມ່ນວ່າຈະມີຂີດຢູ່ຕໍ່ໜ້າ TŽ), ຫຼື ພື້ນຫຼັງສີແດງເຮັດໃຫ້ອ່ານຜົນກວດບໍ່ໄດ້, ການກວດແມ່ນທີ່ອ່ານຜົນກວດບໍ່ໄດ້ ແລະ ຄວນຈະກວດຄືນອີກເທື່ອໜຶ່ງ.

**ທ່ານຈະຕ້ອງໄດ້ກວດອີກຄັ້ງຕື່ມ**



ການກວດບໍ່ເປັນໄປໂດຍບໍ່ຄ່ອງແຄ້ວຫຼືຖືກຕ້ອງ.

ໄປໂຮງໝໍຫລືສູນກວດເຊື້ອ HIV ຫຼື ສະຖານບໍລິການສຸຂະພາບທີ່ຢູ່ໃກ້ບ້ານຂອງທ່ານ ເພື່ອກວດຄືນອີກຄັ້ງ.

### ຜົນກວດ HIV ອອກມາເປັນລົບ

**ຖ້າອ່ານກ່ອນ 20 ນາທີ, ຜົນກວດອາດຈະບໍ່ຖືກຕ້ອງ**




ມີຂີ້ນຂີດໜຶ່ງຢູ່ຕໍ່ໜ້າ CŽ ແລະ ບໍ່ມີຂີດຢູ່ຕໍ່ໜ້າ TŽ, ຜົນກວດຂອງທ່ານເປັນ HIV ລົບ.

ຂໍການກວດປົກກະຕິ.
ຖ້າທ່ານມີຄວາມສ່ຽງສູງໃນການຮັບເຊື້ອ HIV, ໃຫ້ກວດຄືນອີກຄັ້ງຫລັງຈາກ 3 ເດືອນທັດໄປ.

### ບໍ່ແນ່ໃຈຜົນກວດ

ທ່ານບໍ່ຮູ້ຜົນກວດຂອງທ່ານ ຫຼື ທ່ານບໍ່ໝັ້ນໃຈຜົນກວດຂອງທ່ານ.

ໄປໂຮງໝໍຫລືສູນກວດຫາເຊື້ອ HIV ຫຼື ສະຖານບໍລິການສຸຂະພາບທີ່ຢູ່ໃກ້ບ້ານຂອງທ່ານ ເພື່ອກວດຄືນອີກຄັ້ງ.

### ການກໍາຈັດຖິ້ມ

ເອົາແຜ່ນປ້າຍປາກອອກ, ເອົາຝາປິກຫຼອດນໍ້າຢາກວດ ແລະ ຖິ້ມໝົດທຸກຢ່າງລົງໃນຖົງຂີ້ເຫຍື້ອປົກກະຕິ.

ໃຊ້ສໍາລັບກວດພາຍໃນເທົ່ານັ້ນ • ບໍ່ແມ່ນສໍາລັບການເບິ່ງແຍງດູແລຄົນເຈັບ

## ຂໍ້ມູນຜະລິດຕະພັນ

**REF** 5X4-1000, 5X4-1001, 5X4-2001

**ສໍາລັບການໃຊ້ຢູ່ນອກສະຫະລັດອາເມຣິກາເທົ່ານັ້ນ**
**ການໃຊ້ວິທີການກວດໃນຫຼອດແກ້ວ • ຫ້າມນໍາກັບມາໃຊ້ໃໝ່**

### ການໃຊ້ຕາມຈຸດປະສົງ

ເຄື່ອງກວດຫາເຊື້ອ HIV ດ້ວຍຕົວເອງ OraQuick® ແມ່ນອຸປະກອນທາງການແພດກວດວິເຄາະໃນຫຼອດແກ້ວ (IVD) ທີ່ຖືກນໍາໃຊ້ສໍາລັບການກວດຫາດກາຍຕ້ານໃນຮ່າງກາຍດ້ວຍຕົວເອງ ເພື່ອກວດຫາເຊື້ອ HIV-1 ແລະ HIV-2 ຢູ່ໃນທາດແຫຼວໃນເຫງືອກປາກ. ການກວດນີ້ແມ່ນມີຈຸດປະສົງທີ່ຈະຊ່ວຍກວດຫາທາດກາຍຕ້ານໃນຮ່າງກາຍຕໍ່ HIV-1 ແລະ HIV-2 ຈາກຜູ້ທີ່ຕິດເຊື້ອ.

### ສະຫຼຸບສັງລວມການກວດ

ເຄື່ອງກວດຫາເຊື້ອ HIV ດ້ວຍຕົວເອງ OraQuick® ແມ່ນອຸປະກອນກວດພູມຕ້ານທານທາງດ້ານຄຸນນະພາບໃຊ້ເທື່ອດຽວ ເພື່ອກວດເບິ່ງທາດກາຍຕ້ານໃນຮ່າງກາຍຕໍ່ໄວຣັສພູມຕ້ານທານບົກພ່ອງຂອງມະນຸດປະເພດ 1 (Human Immunodeficiency Virus Type 1 - HIV-1) ແລະ ປະເພດ 2 (Type 2 - HIV-2) ຢູ່ໃນຂອງແຫຼວຂອງປາກ. ເຄື່ອງກວດ HIV ດ້ວຍຕົວເອງ OraQuick® ແມ່ນມີຈຸດປະສົງສໍາລັບການໃຊ້ໂດຍຜູ້ໃຊ້ທົ່ວໄປເປັນການກວດດ້ວຍຕົວເອງ ເພື່ອຊ່ວຍໃນການວິເຄາະການຕິດເຊື້ອ HIV-1 ແລະ HIV-2. ອຸປະກອນແມ່ນເອົາມາປ້າຍໃສ່ທີ່ປາກ, ເພື່ອໃຫ້ແຜ່ນກວດຢູ່ລະຫວ່າງແກ້ມ ແລະ ເຫືອກດ້ານນອກ, ຈາກນັ້ນສັບປຸ່ນໄປຫາແຖວເຫືອກທາງນອກ. ຈາກນັ້ນ ນໍາເອົາອຸປະກອນໄປໃສ່ໃນຫຼອດນໍ້າຢາທີ່ມີສານລະລາຍໃນປະລິມານທີ່ວັດແທກໄວ້ມາກ່ອນ. ທາດແຫຼວຈາກຜິວຂອງເຫືອກເຂົ້າສູ່ອຸປະກອນຜ່ານແຜ່ນປ້າຍປາກກວດ, ຈາກນັ້ນໄຫຼເຂົ້າໄປສູ່ແຖບກວດ. ເມື່ອມັນໄຫຼເຂົ້າໄປໃນແຖບ, ເສັ້ນສີປະກອບຕົວຂຶ້ນຢູ່ໃນບ່ອນ (ກວດ) ຕົວ TŽ ຂອງຊ່ອງສະແດງຜົນ ຖ້າທາດກາຍຕ້ານໃນຮ່າງກາຍຂອງ HIV ຖືກກວດພົບ. ຖ້າບໍ່ມີທາດກາຍຕ້ານ HIV ໃນຮ່າງກາຍ, ບໍ່ມີເສັ້ນປະກອບຕົວຂຶ້ນຢູ່ບ່ອນນັ້ນ. ຖ້າການກວດຖືກດໍາເນີນໄປຢ່າງຖືກຕ້ອງ, ເສັ້ນໜຶ່ງປະກອບຂຶ້ນຢູ່ໃນບ່ອນຕົວ CŽ ຂອງຊ່ອງສະແດງຜົນ. ອັນນີ້ເອີ້ນວ່າເສັ້ນຄວບຄຸມ.

### ຄຸນນະພາບຂອງຊຸດກວດ

ຢູ່ໃນການສຶກສາທາງດ້ານຄລີນິກ, 900 ຄົນຜູ້ທີ່ບໍ່ຮູ້ສະຖານະ HIV ຂອງພວກເຂົາໄດ້ຮັບເຄື່ອງກວດ HIV ດ້ວຍຕົວເອງ OraQuick ເພື່ອໄປນໍາໃຊ້. ຜົນໄດ້ຮັບຖືກປຽບທຽບກັບການກວດໃນຫ້ອງທົດລອງລຸ້ນທີ 4. ຜົນກວດໃນຫ້ອງທົດລອງສະແດງໃຫ້ເຫັນວ່າ ທັງໝົດ 153 ຄົນມີ HIV ເປັນບວກ ແລະ 724 ຄົນມີ HIV ເປັນລົບ. ເຈັດ (7) ຄົນແມ່ນບໍ່ໄດ້ເອົາລວມເຂົ້າໃນການສຶກສາ. ການປຽບທຽບຜົນໄດ້ຮັບແມ່ນມີດັ່ງນີ້:

- 99.4% ຂອງຄົນເຂົ້າຮ່ວມ (152 ຈາກ 153) ໄດ້ລາຍງານຜົນກວດຂອງພວກເຂົາວ່າເປັນບວກໄດ້ຢ່າງຖືກຕ້ອງ. ອັນນີ້ໝາຍຄວາມວ່າ 1 ໃນ 153 ຄົນທີ່ຕິດເຊື້ອHIV ໄດ້ລາຍງານຜົນກວດວ່າເປັນລົບ. ອັນນີ້ເອີ້ນວ່າເປັນລົບບໍ່ຖືກຕ້ອງ. ອັນນີ້ເອີ້ນວ່າຜົນລົບບໍ່ເປັນຈິງ.
- 99.0% ຂອງຄົນ (717/724) ລາຍງານຜົນຂອງພວກເຂົາວ່າເປັນລົບຢ່າງຖືກຕ້ອງ. ອັນນີ້ໝາຍຄວາມວ່າ 7 ໃນ 724 ຄົນທີ່ບໍ່ຕິດເຊື້ອ HIV ໄດ້ລາຍງານຜົນກວດວ່າເປັນບວກ. ອັນນີ້ເອີ້ນວ່າ ເປັນບວກບໍ່ຖືກຕ້ອງ.
- ນອກຈາກນັ້ນ, ມີພຽງແຕ່ 1.8% ຂອງຈໍານວນຜູ້ເຂົ້າຮ່ວມການສຶກສາ (16 ຈາກ 900) ຫຼົ້ມເຫຼວທີ່ຈະໄດ້ຜົນໄດ້ຮັບ.

### ລາຍການຕ່າງໆໃນຊຸດກວດ

- ໃນຖົງຊຸດກວດປະກອບດ້ວຍ:
  - ຖົງທີ່ແຍກເປັນຖົງນ້ອຍ (5X4-0004) ທີ່ມີອຸປະກອນກວດໃຊ້ເທື່ອດຽວ, ສານກັນບູດ, ແລະ ຫຼອດສານລະລາຍຂອງຜູ້ພັດທະນາ
  - ອັນຕັ້ງຫລອດນໍ້າຢາກວດ
  - ຄໍາແນະນໍາສໍາລັບການໃຊ້

**ວັດຖຸອຸປະກອນທີ່ຕ້ອງການ ແຕ່ບໍ່ໄດ້ສະໜອງໃຫ້: ໂມງຕັ້ງ, ໂມງໃສ່ແຂນ, ຫຼື ອຸປະກອນຈັບເວລາ**




### ⚠ ຄໍາເຕືອນ ແລະ ຄໍາແນະນໍາລ່ວງໜ້າ

- ຄົນສ່ວນໃຫຍ່ຮູ້ສຶກປອດທົ່ວໜ້ອຍໜຶ່ງ ໃນເວລາ ກວດ HIV. ແຕ່ຖ້າທ່ານຮູ້ສຶກກັງວົນກ່ຽວກັບການເຂົ້າກວດ, ທ່ານອາດຈະຕ້ອງໄດ້ລໍຖ້າຈົນກວ່າທ່ານສະຫງົບຈິດໃຈລົງ ເພື່ອກວດ, ຫຼື ໃຫ້ທ່ານໝໍ ຫຼື ຄລີນິກທ້ອງຖິ່ນຂອງທ່ານກວດ.
- **ຫ້າມ**ໃຊ້ເຄື່ອງກວດ ຖ້າທ່ານມີ HIV ເປັນບວກແລ້ວ.
- ໃຊ້ກວດກັບທາດແຫຼວໃນປາກເທົ່ານັ້ນ. ເຄື່ອງກວດແມ່ນບໍ່ໃຊ້ກັບການກວດເລືອດ, ຊີຣໍາ, ນົມແມ່, ປລາສມາ, ນໍ້າເຊື້ອ, ຍ່ຽວ, ຂອງແຫຼວຈາກຊ່ອງຄອດ ຫຼື ເຫື່ອ.
- **ຫ້າມ**ກິນ ຫຼື ດື່ມເປັນເວລາຢ່າງໜ້ອຍ 15 ນາທີກ່ອນເລີ່ມການກວດ.
- **ຫ້າມ**ໃຊ້ຜະລິດຕະພັນອະນາໄມປາກ (ເຊັ່ນ: ນໍ້າຢາບ້ວນປາກ) 30 ນາທີກ່ອນເລີ່ມຕົ້ນການກວດ.
- ເອົາຜະລິດຕະພັນກ່ຽວກັບແຂ້ວອອກເຊັ່ນ: ແຂ້ວປອມ ຫຼື ຜະລິດຕະພັນອື່ນໆໃດໜຶ່ງ ທີ່ປົກຫຸ້ມເຫືອກຂອງທ່ານກ່ອນທໍາການເກັບຂອງແຫຼວຈາກປາກ.
- ຖ້າສິ່ງຫຸ້ມຫໍ່ປິດຫູກຖານຖືກທໍາລາຍ ຫຼື ຈີກຂາດ ຫຼື ຖ້າສິ່ງປະກອບການຫຸ້ມຫໍ່ໃດໜຶ່ງເສຍໄປ, ຈີກຂາດ, ຫຼື ເປີດ, ຫ້າມໃຊ້ເຄື່ອງກວດນີ້.
- ຖ້າພົບເຫັນແຜ່ນກວດຢູ່ນອກຈາກຊອງ, ຫ້າມໃຊ້ເຄື່ອງກວດນີ້.
- ບຸກຄົນຕ່າງໆທີ່ກວດຕ້ອງມີແສງສະຫວ່າງພຽງພໍ ເພື່ອອ່ານຜົນ. ຖ້າມີສອງຂີດປະກົດຂຶ້ນຢູ່ບໍລິເວນທີ່ໝາຍເປັນຕົວ TŽ ແລະ CŽ ຢູ່ໃນອຸປະກອນກວດສອບໃນຄວາມເຂັ້ມທີ່ສາມາດເຫັນໄດ້, ຜົນກວດຖືກຕີຄວາມໝາຍວ່າເປັນບວກ.
- **ຫ້າມ**ເປີດຊອງຈົນກວ່າ ທ່ານພ້ອມເລີ່ມຕົ້ນການກວດຂອງທ່ານ.
- **ຫ້າມ**ໃຊ້ເຄື່ອງກວດ ຖ້າມັນເປີດໄປຖືກຜະລິດຕະພັນທໍາຄວາມສະອາດໃນຄົວເຮືອນແລ້ວ (ເຊັ່ນ: ນໍ້າຢາຟອກຂາວ).
- ຖ້າທ່ານໄດ້ເຂົ້າຮ່ວມໃນການທົດລອງທາງຄລີນິກກ່ຽວກັບການສັກຢາປ້ອງກັນ HIV, ທ່ານອາດຈະໄດ້ຮັບຜົນກວດເປັນບວກດ້ວຍການໃຊ້ເຄື່ອງກວດນີ້, ແຕ່ມັນອາດຈະບໍ່ໝາຍຄວາມວ່າ ທ່ານຕິດເຊື້ອ HIV ແລ້ວ. ທ່ານຄວນຈະຂໍການຕິດຕາມຄືນກັບສະຖານບໍລິການສຸຂະພາບຂອງທ່ານ.
- **ຫ້າມ**ໃຊ້ເຄື່ອງກວດນີ້ ຖ້າທ່ານອາຍຸ 11 ປີ ຫຼື ອ່ອນກວ່າ.

### 30 °C 2 °C ການເກັບຮັກສາ

- ເກັບຮັກສາໃນອຸນຫະພູມ ແລະ ທໍາການກວດຢູ່ບ່ອນເຢັນ.
- ຫ້າມໃຊ້ເຄື່ອງກວດນີ້ ຖ້າມັນຖືກເກັບໄວ້ຢູ່ນອກບ່ອນອຸນຫະພູມທີ່ຍອມຮັບໄດ້ຄື 2º-30º C (36º-86º F).
- ການກວດຄວນກວດຢູ່ທີ່ອຸນຫະພູມໃນລະດັບ 15º-37º C (59º-99º F).

### ຂໍ້ຈໍາກັດຂອງການກວດ

- ຄໍາແນະນໍາສໍາລັບການໃຊ້ຊຸດເຄື່ອງກວດ HIV ດ້ວຍຕົວເອງ OraQuick® ແມ່ນຕ້ອງໄດ້ປະຕິບັດຕາມຢ່າງຄົບຖ້ວນ ເພື່ອໃຫ້ໄດ້ຜົນກວດທີ່ຖືກຕ້ອງ.
- ຖ້າທ່ານກໍາລັງຮັບການປິ່ນປົວ HIV ດ້ວຍຢາ (ARVs) ຢູ່ ທ່ານອາດຈະໄດ້ຮັບຜົນກວດທີ່ຜິດພາດໄດ້.
- ຖ້າທ່ານມີ HBV, HCV or HTLV (I/II) ເປັນບວກ, ທ່ານອາດຈະໄດ້ຮັບຜົນກວດຜິດ.
- ການມີເລືອດໄຫຼໃນປາກອາດຈະເຮັດໃຫ້ໄດ້ຜົນໃຊ້ບໍ່ໄດ້. ຖ້າຜົນກວດໃຊ້ບໍ່ໄດ້, ສູນກວດເຊື້ອ HIV ຫຼື ສະຖານບໍລິການສຸຂະພາບທີ່ຢູ່ໃກ້ທີ່ສຸດຂອງທ່ານ.
- ຂໍ້ມູນທາງຄລີນິກແມ່ນຍັງບໍ່ໄດ້ເກັບເອົາເທື່ອ ເພື່ອສະແດງໃຫ້ເຫັນການທໍາການກວດ HIV ດ້ວຍຕົວເອງຂອງ OraQuick® ຢູ່ໃນບຸກຄົນທີ່ກໍາລັງໃຊ້ PrEP.
- ອຸປະກອນກວດ HIV ດ້ວຍຕົວເອງ OraQuick® ອາດຈະບໍ່ກວດເຫັນການຕິດເຊື້ອ HIV ທີ່ເກີດຂຶ້ນຢູ່ພາຍໃນ 3 ເດືອນໄດ້ເທື່ອ (ໄລຍະປ້ອງຢຸ້ມ).
- ສໍາລັບຜົນທີ່ເປັນບວກ, ຄວາມເຂັ້ມຂອງເສັ້ນກວດບໍ່ຈໍາເປັນຕ້ອງເທົ່າກັບປະລິມານຂອງທາດກາຍຕ້ານໃນຮ່າງກາຍ ຢູ່ໃນຕົວຢ່າງ.
- ຜົນເປັນບວກຄວນໄດ້ຮັບການກວດຢັ້ງຢືນດ້ວຍການໃຊ້ການກວດອື່ນ ທີ່ກວດໂດຍແພດທີ່ໄດ້ຮັບການອົບຮົມມາຢ່າງຄັກແນ່ ເພື່ອຢັ້ງຢືນການວິເຄາະຜົນ HIV.

### ຄໍາຖາມ ແລະ ຄໍາຕອບ

**1. ເຄື່ອງກວດເຮັດຫຍັງ?**

ເຄື່ອງກວດ HIV ດ້ວຍຕົວເອງ OraQuick® ແມ່ນເຄື່ອງກວດດ້ວຍຕົວເອງວິເຄາະໃນຫຼອດແກ້ວສໍາລັບກວດ HIV (HIV-1 ແລະ HIV-2) ຢູ່ໃນຂອງແຫຼວໃນປາກ.
ເຄື່ອງກວດເຮັດໜ້າທີ່ໂດຍການກວດທາດກາຍຕ້ານໃນຮ່າງກາຍທໍາມະຊາດຂອງຮ່າງກາຍຂອງທ່ານ ທີ່ຊ່ວຍທ່ານຕໍ່ສູ້ການຕິດເຊື້ອ. ຜົນກວດເປັນບວກແມ່ນເປັນຂັ້ນຕົ້ນ ແລະ ຈໍາເປັນຕ້ອງມີການກວດເພີ່ມເຕີມຢູ່ສະຖານບໍລິການສຸຂະພາບ ເພື່ອຢັ້ງຢືນຜົນກວດວ່າເປັນຄວາມຈິງ.

**2. ບັນດາຄວາມສ່ຽງ ສໍາລັບ HIV ແມ່ນມີແນວໃດແດ່?**

ບັນດາ ຄວາມສ່ຽງຖືກກໍານົດໂດຍກິດຈະກໍາໃດໜຶ່ງດັ່ງລຸ່ມນີ້:
- ການມີເພດສໍາພັນ (ທາງຊ່ອງຄອດ, ທາງປາກ ຫຼື ທາງຮູທະວານ) ທີ່ບໍ່ໄດ້ປ້ອງກັນກັບຄູ່ຮ່ວມເພດຫຼາຍຄົນ
- ການມີເພດສໍາພັນກັບຄົນໃດຄົນໜຶ່ງ ຜູ້ທີ່ມີເຊື້ອ HIV ເປັນບວກ ຫຼື ຜູ້ທີ່ທ່ານບໍ່ຮູ້ຈັກສະຖານະ HIV ຂອງຜູ້ກ່ຽວ
- ການມີເພດສໍາພັນລະຫວ່າງຊາຍກັບຊາຍ
- ການໃຊ້ເຂັມສີດຢາເສບຕິດ ຫຼື ສະເຕີຣອຍ
- ການໃຊ້ເຂັມສັກຢາ ຫຼື ສະແຫຼ້ງສັກຢາຮ່ວມກັນ
- ການຂາຍບໍລິການທາງເພດ
- ການຖືກກວດພົບວ່າເປັນ ຫຼື ປິ່ນປົວພະຍາດຕັບອັກເສບ, ວັນນະໂລກ ຫຼື ພະຍາດຕິດຕໍ່ທາງເພດສໍາພັນເຊັ່ນ: ໜອງໃນ

**3. ຫຼັງຈາກມີຄວາມສ່ຽງແລ້ວ ຂ້ອຍສາມາດກວດຕົວເອງໄດ້ໄວປານໃດ?**

ທ່ານສາມາດກວດໃນເວລາໃດກໍ່ໄດ້; ຖ້າທ່ານກໍາລັງໃຊ້ການກວດນີ້ຢູ່ກ່ອນເວລາສາມເດືອນນັບແຕ່ມື້ທີ່ມີຄວາມສ່ຽງ ແລະ ການກວດຂອງທ່ານອອກມາເປັນລົບ, ຜົນໄດ້ຮັບຂອງທ່ານອາດຈະບໍ່ຖືກຕ້ອງ. ທ່ານຄວນກວດອີກໃນເວລາ 3 ເດືອນຫຼັງຈາກກໍລະນີຄວາມສ່ຽງ ເພື່ອໃຫ້ແນ່ໃຈ. ທ່ານຍັງສາມາດກວດຢູ່ສະຖານບໍລິການສຸຂະພາບໄດ້ນໍາອີກ.

**4. ເປັນຫຍັງຂ້ອຍບໍ່ຄວນໃຊ້ວິທີການກວດນີ້ໂດຍທັນທີຫຼັງຈາກມີກໍລະນີທີ່ມີຄວາມສ່ຽງ?**

ໃນເວລາທ່ານໄດ້ຮັບເຊື້ອໄວຣັສ HIV, ຮ່າງກາຍຂອງທ່ານພະຍາຍາມຕໍ່ສູ້ກັບເຊື້ອໄວຣັສ HIV ໂດຍການຜະລິດທາດກາຍຕ້ານໃນຮ່າງກາຍທໍາມະຊາດຂຶ້ນມາ. ທາດກາຍຕ້ານໃນຮ່າງກາຍເຫຼົ່ານີ້ແມ່ນສາມາດພົບໄດ້ຢູ່ໃນທາດແຫຼວໃນເຫງືອກປາກ ຂອງທ່ານ. ມັນໃຊ້ເວລາເຖິງ 3 ເດືອນ ເພື່ອໃຫ້ຮ່າງກາຍຂອງທ່ານສ້າງທາດກາຍຕ້ານໃນຮ່າງກາຍເຫຼົ່ານີ້ຂຶ້ນມາໃນລະດັບທີ່ສາມາດກວດໄດ້ໂດຍການກວດວິທີນີ້.

**5. ອຸປະກອນກວດນີ້ມີຄວາມຖືກຕ້ອງເທົ່າໃດ?**

ຢູ່ໃນການສຶກສາທາງດ້ານຄລີນິກ, 900 ຄົນຜູ້ທີ່ບໍ່ຮູ້ສະຖານະ HIV ຂອງພວກເຂົາໄດ້ຮັບເຄື່ອງກວດ HIV ດ້ວຍຕົວເອງ OraQuick ເພື່ອໄປນໍາໃຊ້. ຜົນໄດ້ຮັບຖືກປຽບທຽບກັບການກວດໃນຫ້ອງທົດລອງລຸ້ນທີ 4. ຜົນກວດໃນຫ້ອງທົດລອງສະແດງໃຫ້ເຫັນວ່າ ທັງໝົດ 153 ຄົນມີ HIV ເປັນບວກ ແລະ 724 ຄົນມີ HIV ເປັນລົບ. ເຈັດ (7) ຄົນແມ່ນບໍ່ໄດ້ເອົາລວມເຂົ້າໃນການສຶກສາ. ການປຽບທຽບຜົນໄດ້ຮັບແມ່ນມີດັ່ງນີ້:
- 99.4% ຂອງຄົນເຂົ້າຮ່ວມ (152 ຈາກ 153) ໄດ້ລາຍງານຜົນກວດຂອງພວກເຂົາວ່າເປັນບວກໄດ້ຢ່າງຖືກຕ້ອງ. ອັນນີ້ໝາຍຄວາມວ່າ 1 ໃນ 153 ຄົນທີ່ຕິດເຊື້ອHIV ໄດ້ລາຍງານຜົນກວດວ່າເປັນລົບ. ອັນນີ້ເອີ້ນວ່າເປັນລົບບໍ່ຖືກຕ້ອງ. ອັນນີ້ເອີ້ນວ່າຜົນລົບບໍ່ເປັນຈິງ.
- 99.0% ຂອງຄົນ (717/724) ລາຍງານຜົນຂອງພວກເຂົາວ່າເປັນລົບຢ່າງຖືກຕ້ອງ. ອັນນີ້ໝາຍຄວາມວ່າ 7 ໃນ 724 ຄົນທີ່ບໍ່ຕິດເຊື້ອ HIV ໄດ້ລາຍງານຜົນກວດວ່າເປັນບວກ. ອັນນີ້ເອີ້ນວ່າ ເປັນບວກບໍ່ຖືກຕ້ອງ.
- ນອກຈາກນັ້ນ, ມີພຽງແຕ່ 1.8% ຂອງຈໍານວນຜູ້ເຂົ້າຮ່ວມການສຶກສາ (16 ຈາກ 900) ຫຼົ້ມເຫຼວທີ່ຈະໄດ້ຜົນໄດ້ຮັບ.

**6. ຂ້ອຍສາມາດໄດ້ຮັບເຊື້ອ HIV ດ້ວຍການໃຊ້ເຄື່ອງກວດນີ້ບໍ?**

ເຄື່ອງກວດນີ້ບໍ່ມີວັດຖຸ ຫຼື ເຊື້ອ HIV ໃດທີ່ສາມາດເຮັດໃຫ້ເກີດການຕິດເຊື້ອ HIV ໄດ້.

**7. ຄົນໜຶ່ງຄວນກວດຫາເຊື້ອ HIV ຖີ່ປານໃດ?**

ຖ້າທ່ານບໍ່ເຄີຍກວດຫາເຊື້ອ HIV, ທ່ານຄວນກວດຢ່າງໜ້ອຍຄັ້ງໜຶ່ງ. ຖ້າທ່ານເຮັດສິ່ງຕ່າງໆ (ກໍລະນີທີ່ມີຄວາມສ່ຽງ) ທີ່ສາມາດເຮັດໃຫ້ມີການຕິດເຊື້ອ HIV ທ່ານຄວນຈະໄດ້ຮັບການກວດຢ່າງໜ້ອຍປີລະເທື່ອ (ຕາມຄໍາສະເໜີແນະນໍາຂອງອົງການອະນາໄມໂລກ).
**ຖ້າທ່ານຮູ້ສຶກວ່າ ທ່ານມີຄວາມສ່ຽງເພີ່ມຂຶ້ນຕໍ່ການຕິດເຊື້ອ HIV, ທ່ານຄວນກວດເປັນປົກກະຕິ.**(ສາມເດືອນຕໍ່ຄັ້ງ)

**8. ຜົນກວດເປັນລົບໝາຍຄວາມວ່າແນວໃດ?**

ຜົນກວດເປັນລົບໝາຍຄວາມວ່າ ການກວດບໍ່ພົບທາດກາຍຕ້ານໃນຮ່າງກາຍໃດ; ເຖິງແນວໃດກໍ່ຕາມ, ມັນອາດຈະໃຊ້ເວລາເຖິງ 3 ເດືອນນັບຈາກກໍລະນີມີຄວາມສ່ຽງສໍາລັບການທີ່ຈະກວດເຫັນ HIV. ຖ້າມັນເປັນເວລາ **ຢ່າງໜ້ອຍ 3 ເດືອນແລ້ວ** ນັບຕັ້ງແຕ່ທ່ານມີຄວາມສ່ຽງ ແລະ ທ່ານປະຕິບັດຕາມຄໍາແນະນໍາສໍາລັບການໃຊ້ຢ່າງລະມັດລະວັງແລ້ວ, ທ່ານອາດຈະບໍ່ມີເຊື້ອ HIV. ຖ້າມັນຍັງເປັນເວລາໜ້ອຍກວ່າ **3 ເດືອນ** ນັບຕັ້ງແຕ່ທ່ານມີຄວາມສ່ຽງ, ໃຫ້ລໍຖ້າໄປຄົບ **3 ເດືອນ** ນັບຕັ້ງແຕ່ມີຄວາມສ່ຽງ ເພື່ອ ກວດ ຫຼື ໄປຫາສະຖານເບິ່ງແຍງດູແລສຸຂະພາບຂອງທ່ານ.

**9. ຂ້ອຍຄວນຈະເຮັດແນວໃດ ຖ້າຂ້ອຍໄດ້ຜົນກວດເປັນລົບ?**

ຖ້າທ່ານບໍ່ມີຄວາມສ່ຽງໃດໆພາຍໃນ **3 ເດືອນ**ຜ່ານມາ, ແລະ ທ່ານປະຕິບັດຕາມຄໍາແນະນໍາສໍາລັບການໃຊ້ຢ່າງດີແລ້ວ, ຈາກນັ້ນກໍ່ໝາຍຄວາມວ່າ ທ່ານອາດຈະບໍ່ມີ HIV. ຖ້າທ່ານບໍ່ປະຕິບັດຕາມຄໍາແນະນໍາສໍາລັບການໃຊ້ຢ່າງດີ, ທ່ານຄວນກວດອີກ ເພື່ອໃຫ້ແນ່ໃຈວ່າ ຜົນກວດຖືກຕ້ອງ. ຖ້າທ່ານມີຄວາມສ່ຽງຢູ່ໃນ **3 ເດືອນ**ຜ່ານມາ, ທ່ານສາມາດຢູ່ໃນ ໄລຍະປ່ອງຢຸ້ມອາດມີການຕິດເຊື້ອ ແຕ່ຍັງກວດບໍ່ເຫັນເທື່ອ. ໄລຍະປ່ອງຢຸ້ມອາດມີການຕິດເຊື້ອແຕ່ຍັງກວດບໍ່ເຫັນເທື່ອ (window period) ແມ່ນເວລາຄົນຕິດເຊື້ອ HIV ແລ້ວ, ແຕ່ຮ່າງກາຍຂອງພວກເຂົາບໍ່ທັນສ້າງທາດກາຍຕ້ານຂຶ້ນມາເທື່ອ. **ຖ້າທ່ານຄິດວ່າ ທ່ານອາດຈະຖືກສໍາຜັດກັບເຊື້ອ HIV ຢູ່ພາຍໃນ 3 ເດືອນຜ່ານມາ, ທ່ານຄວນ ກວດ HIV ຄືນໃນ 3 ເດືອນ** ຫຼັງຈາກມີຄວາມສ່ຽງໃດໜຶ່ງ. ຖ້າທ່ານສືບຕໍ່ມີສ່ວນພົວພັນຢູ່ໃນຄວາມສ່ຽງ ທີ່ສາມາດເຮັດໃຫ້ທ່ານມີຄວາມສ່ຽງໄດ້ຮັບເຊື້ອ HIV, ທ່ານຄວນກວດເປັນປົກກະຕິ.

**10. ຜົນກວດເປັນບວກໝາຍຄວາມວ່າແນວໃດ?**

ຜົນກວດເປັນບວກໝາຍຄວາມວ່າ ທ່ານອາດຈະມີເຊື້ອ HIV. **ຕ້ອງໄດ້ ກວດເພີ່ມເຕີມຢູ່ຕາມໂຮງໝໍ, ສະຖານເບິ່ງແຍງດູແລສຸຂະພາບ ເພື່ອຢັ້ງຢືນຜົນກວດ.**

**11. ຂ້ອຍຄວນຈະເຮັດແນວໃດ ຖ້າຂ້ອຍໄດ້ຜົນກວດເປັນHIV ບວກ?**

ທ່ານຈະຕ້ອງໄດ້ໄປກວດຢັ້ງຢືນຄືນທີ່ໂຮງໝໍຫລືສູນປິ່ນປົວ ເພື່ອກວດຢັ້ງຢືນໃນເວລານັ້ນ, ທ່ານໝໍ, ຫຼື ແພດຊ່ຽວຊານການເບິ່ງແຍງດູແລສຸຂະພາບຂອງທ່ານຈະໃຫ້ຄໍາປຶກສາຂັ້ນຕອນຕໍ່ໄປທີ່ຈໍາເປັນຕ້ອງໄດ້ປະຕິບັດ.

**12. ຂ້ອຍສາມາດໄດ້ຮັບຜົນກວດເປັນລົບ ບໍ່ຖືກຕ້ອງ ກັບການກວດນີ້ບໍ?**

ຜົນກວດເປັນລົບ ບໍ່ຖືກຕ້ອງ ສາມາດເກີດຂຶ້ນໄດ້ດ້ວຍເຫດຜົນໃດໜຶ່ງຕໍ່ໄປນີ້ຄື:
- ຖ້າທ່ານມີຄວາມສ່ຽງໜ້ອຍກວ່າ 3 ເດືອນກ່ອນ ກວດ
- ການອ່ານຜົນກວດບໍ່ຖືກຕ້ອງວ່າເປັນລົບ
- ບໍ່ເອົາໃຈໃສ່ປະຕິບັດຕາມຄໍາແນະນໍາສໍາລັບການໃຊ້
- ຖ້າທ່ານໃສ່ຜະລິດຕະພັນແຂ້ວຢູ່ເຊັ່ນ: ແຂ້ວປອມ ຫຼື ຜະລິດຕະພັນໃດໜຶ່ງທີ່ປົກຫຸ້ມເຫືອກຂອງທ່ານ ໃນຂະນະທີ່ທໍາການສັບປຸ່ນກວດເຫືອກຂອງທ່ານ
- ຖ້າທ່ານກໍາລັງປະຕິບັດຂໍ້ກໍານົດທາງການແພດກ່ຽວກັບການໃຊ້ PrEP ທາງປາກ ຫຼື ທ່ານຢູ່ໃນການປິ່ນປົວ HIV (ARV)

**13. ຂ້ອຍສາມາດໄດ້ຮັບຜົນກວດເປັນບວກທີ່ບໍ່ຖືກຕ້ອງ ກັບການກວດນີ້ບໍ?**

ຜົນກວດເປັນບວກ ບໍ່ຖືກຕ້ອງ ຫຼື ຜິດສາມາດເກີດຂຶ້ນໄດ້ດ້ວຍເຫດຜົນໃດໜຶ່ງຕໍ່ໄປນີ້ຄື:
- ການອ່ານຜົນກວດບໍ່ຖືກຕ້ອງວ່າເປັນບວກ
- ບໍ່ເອົາໃຈໃສ່ປະຕິບັດຕາມຄໍາແນະນໍາສໍາລັບການໃຊ້
- ບໍ່ລໍຖ້າຈົນຮອດ 15 ນາທີຫຼັງຈາກກິນອາຫານ, ດື່ມເຄື່ອງດື່ມ, ຫຼື 30 ນາທີ ຫຼັງຈາກໃຊ້ຜະລິດຕະພັນເບິ່ງແຍງດູແລປາກກ່ອນທໍາການກວດ
- ກໍາລັງໄດ້ຮັບຢາປ້ອງກັນ HIV ຢູ່
- ປ້າຍຫຼາຍຄັ້ງໃນລະຫວ່າງການເກັບຕົວຢ່າງຈາກເຫງືອກປາກ

**14. ຂ້ອຍສາມາດຂໍຄວາມຊ່ວຍເຫຼືອ ຫຼື ການເບິ່ງແຍງດູແລເພີ່ມເຕີມສໍາລັບ HIV ໄດ້ຢູ່ໃສ?**

ທ່ານສາມາດຂໍການຊ່ວຍເຫຼືອເພີ່ມເຕີມໄດ້ຜ່ານຄລີນິກໃນທ້ອງຖິ່ນ, ທ່ານໝໍ, ຫຼື ແພດຊ່ຽວຊານການເບິ່ງແຍງດູແລສຸຂະພາບ.

**15. ຂ້ອຍສາມາດໃຊ້ການກວດນີ້ໄດ້ບໍ ຖ້າຂ້ອຍກໍາລັງກິນຢາປ້ອງກັນ HIV (PrEP ທາງປາກ) ຢູ່?**

ຖ້າທ່ານກໍາລັງກິນຢາ PrEP ທາງປາກປ້ອງກັນ HIV ຢູ່, ທ່ານອາດຈະໄດ້ຮັບຜົນຜິດ.

**16. ຂ້ອຍສາມາດບອກໄດ້ແນວໃດວ່າ ການກວດຂອງຂ້ອຍເຮັດວຽກຢ່າງຖືກຕ້ອງ?**

ຖ້າການກວດຂອງທ່ານກໍາລັງເຮັດວຽກໄດ້ຢ່າງຖືກຕ້ອງ ທ່ານຈະເຫັນເສັ້ນໜຶ່ງຢູ່ຕໍ່ໜ້າຕົວ CŽ ຢູ່ໃນອຸປະກອນກວດຂອງທ່ານ. ຖ້າບໍ່ມີເສັ້ນຢູ່ຕໍ່ໜ້າຕົວ CŽ ການກວດຂອງທ່ານບໍ່ເຮັດວຽກ.

**17. ຂ້ອຍສາມາດໃຊ້ການກວດນີ້ໄດ້ບໍ ຖ້າຂ້ອຍຖືພາຢູ່?**

ໄດ້, ຖ້າທ່ານຖືພາ ທ່ານສາມາດກວດໄດ້ທຸກເວລາ.

### ສານລົບກວນ ແລະ ສະພາບທາງການແພດທີ່ບໍ່ກ່ຽວຂ້ອງ

ເນື່ອງຈາກເປັນສ່ວນໜຶ່ງຂອງການສຶກສາທາງດ້ານຄລີນິກທາດແຫຼວໃນເຫງືອກປາກ, ຂໍ້ມູນຖືກເກັບເອົາຈາກຜູ້ເຂົ້າຮ່ວມກ່ຽວກັບພະຍາດທີ່ເກີດຂຶ້ນພ້ອມກັນ ຫຼື ສະພາບທາງການແພດຕ່າງໆ, ເຊື້ອພະຍາດໃນປາກ, ການຕິດເຊື້ອໄວຣັສທີ່ບໍ່ແມ່ນ HIV, ແລະ ປັດໃຈອື່ນໆ (ຕົວຢ່າງ, ການໃຊ້ຜະລິດຕະພັນຢາສູບ, ການໃຊ້ນໍ້າຢາບ້ວນປາກພາຍໃນ 24 ຊົ່ວໂມງຂອງການກວດ, ຜົນຕາມມາຂອງການປິ່ນປົວດ້ວຍຢາ, ສິ່ງປະດັບຕົບແຕ່ງແຂ້ວ, ແລະ ອາຫານ ຫຼື ເຄື່ອງດື່ມທັນທີກ່ອນການກວດ). ຢູ່ໃນການສຶກສາແຍກຕ່າງຫາກກັບ 40 ຄົນ, ການດື່ມເຫຼົ້າ, ການຖູແຂ້ວ, ການໃຊ້ນໍ້າຢາບ້ວນປາກ ຫຼື ການສູບຢາ 5 ນາທີກ່ອນການກວດ ແມ່ນສະແດງໃຫ້ເຫັນວ່າບໍ່ມີຜົນກະທົບຕໍ່ຂໍ້ກໍານົດສະເພາະຂອງການກວດ. **ຖ້າທ່ານມີ HBV, HCV ຫຼື HTLV (I/II) ເປັນບວກ, ທ່ານອາດຈະໄດ້ຮັບຜົນ**ຜິດ. ຂໍ້ແນະນໍາໃຫ້ຜູ້ໃຊ້ສັງເກດໄລຍະລໍຖ້າ 15 ນາທີ ຫຼັງຈາກກິນອາຫານ ແລະ ເຄື່ອງດື່ມ ແລະ ໄລຍະລໍຖ້າ 30 ນາທີຫຼັງຈາກໃຊ້ຜະລິດຕະພັນດູແລປາກ.

### ຄໍາອະທິບາຍເຄື່ອງໝາຍ

| | | | | | | | |
|---|---|---|---|---|---|---|---|
| LOT | ລະຫັດຊຸດ | REF | ເລກທີແຄັດຕາລັອກ | ⚠ | ຄໍາເຕືອນ, ຄໍາປຶກສາ ເອກະສານກໍາກັບ | i | ໃຫ້ເບິ່ງຄໍາແນະນໍາສໍາລັບການໃຊ້ |
| ② | ຫ້າມນໍາກັບມາໃຊ້ໃໝ່ | IVD | ອຸປະກອນທາງການແພດວິທີກວດໃນຫຼອດແກ້ວ | | ຜູ້ຜະລິດ | EXP | ວັນທີໝົດອາຍຸ |
| | ການຈໍາກັດອຸນຫະພູມ | | ໃຊ້ໂດຍ | | | DOM | ວັນທີຜະລິດ |

*ຜະລິດສໍາລັບໃນປະເທດໄທ*


OraSure Technologies, Inc.

220 East First Street,
Bethlehem, PA 18015 USA
(+1) 610-882-1820
www.OraSure.com



© 2017, 2018 OraSure Technologies, Inc. • OraQuick®, ອອກແບບໂລໂກ້, ແລະ ການກໍານົດແມ່ນເຄື່ອງໝາຍການຄ້າຂອງ OraSure Technologies, Inc.



ລາຍການເລກທີ 3001-3098 ດັດແກ້ 01/18